ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ

ເລກທີ.......143........../ປທສ

ນະຄອນຫຼວງວຽງຈັນ, ວັນທີ..20 ມັງກອນ 2017

# ຂໍ້ຕົກລົງ
## ວ່າດ້ວຍ ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ

- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍ ສູນຂໍ້ມູນຂ່າວສານຜ່ານອິນເຕີເນັດ ສະບັບເລກທີ 412/ລບ, ລົງວັນທີ 10 ພະຈິກ 2016.
- ອີງຕາມ ດຳລັດຂອງນາຍົກລັດຖະມົນຕີ ວ່າດ້ວຍການຈັດຕັ້ງ ແລະ ເຄື່ອນໄຫວຂອງ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ສະບັບເລກທີ 303/ນຍ, ລົງວັນທີ 26 ກັນຍາ 2011.

## ລັດຖະມົນຕີ ອອກຂໍ້ຕົກລົງ:

## ໝວດທີ 1
## ບົດບັນຍັດທົ່ວໄປ

### ມາດຕາ 1. ຈຸດປະສົງ

ຂໍ້ຕົກລົງສະບັບນີ້ກຳນົດຫຼັກການ, ລະບຽບການ ແລະ ມາດຕະການ ໃນການຄຸ້ມຄອງ, ຕິດຕາມ ແລະ ກວດກາ ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ເພື່ອສົ່ງເສີມ ແລະ ພັດທະນາ ການນຳໃຊ້ ແລະ ການບໍລິການໃຫ້ມີປະສິດທິພາບ ແນໃສ່ໃຫ້ມີຄວາມເປັນລະບຽບ, ປອດໄພ, ຍຸຕິທຳ ຕໍ່ຜູ້ຊົມໃຊ້ ແລະ ສັງຄົມ ປະກອບ ສ່ວນເຂົ້າໃນການສ້າງສາ ແລະ ພັດທະນາປະເທດຊາດ.

### ມາດຕາ 2. ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ

ການດຳເນີນທຸລະກິດຊອບແວ ແມ່ນການເຄື່ອນໄຫວທາງທຸລະກິດ ໃນການບໍລິການສ້າງ, ພັດທະນາ, ຈຳໜ່າຍ ແລະ ບໍລິການອື່ນ ດ້ານຊອບແວ.

ການດຳເນີນທຸລະກິດສູນບໍລິການຂໍ້ມູນຂ່າວສານ ແມ່ນການເຄື່ອນໄຫວທາງທຸລະກິດ ໃນການບໍລິການການສ້າງ, ພັດທະນາ ແລະ ສະໜອງບໍລິການຂໍ້ມູນຂ່າວສານ ໃນຮູບແບບເອເລັກໂຕຣນິກ.

ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງໄດ້ຮັບໃບອະນຸຍາດຈາກ ຂະແໜງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

**ມາດຕາ 3. ການອະທິບາຍສັບ**

ຄຳສັບທີ່ໃຊ້ໃນຂໍ້ຕົກລົງສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ຊອບແວ (Software)** ໝາຍເຖິງ ໂປຣແກຣມ ຫຼື ຊຸດຄຳສັ່ງ ທີ່ບັນຊາຄອມພິວເຕີ ຫຼື ອຸປະກອນ ເອເລັກໂຕຣນິກອື່ນ ໃຫ້ປະຕິບັດງານສະເພາະໃດໜຶ່ງ;

2. **ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ (Internet Content Center)** ໝາຍເຖິງ ສູນໃຫ້ບໍລິການຂໍ້ມູນຂ່າວສານຕ່າງໆ ໃນຮູບແບບເອເລັກໂຕຣນິກ ເປັນຕົ້ນ ສື່ສັງຄົມອອນລາຍ, ວິດີໂອ, ຮູບພາບ, ສຽງ, ເພງ, ໜັງສືຜ່ານອິນເຕີເນັດ;

3. **ຂໍ້ມູນເອເລັກໂຕຣນິກ** ໝາຍເຖິງ ຂໍ້ມູນທີ່ບັນທຶກ ຫຼື ເກັບຮັກສາໄວ້ໃນຮູບແບບດີຈິຕອນ ຊຶ່ງສາມາດອ່ານໄດ້ ດ້ວຍລະບົບສະແດງຂໍ້ມູນ, ການພິມອອກ ຫຼື ດ້ວຍຮູບແບບອື່ນ;

4. **ຖານຂໍ້ມູນ (Data Base)** ໝາຍເຖິງ ບ່ອນເກັບຮັກສາຂໍ້ມູນໃນຮູບແບບເອເລັກໂຕຣນິກໄວ້ຢ່າງເປັນລະບົບທີ່ສາມາດຄຸ້ມຄອງ, ປັບປຸງ ແລະ ນຳໃຊ້ໄດ້;

5. **ສູນກາງເຊື່ອມຕໍ່ອິນເຕີເນັດ (National Internet Exchange, International Internet Gateway)** ໝາຍເຖິງ ຈຸດເຊື່ອມຕໍ່ລະຫວ່າງຜູ້ໃຫ້ບໍລິການອິນເຕີເນັດພາຍໃນປະເທດນຳກັນ ແລະ ລະຫວ່າງເຄືອຂ່າຍອິນເຕີເນັດພາຍໃນ ແລະ ສາກົນ;

6. **ເວັບໄຊ (Website)** ໝາຍເຖິງ ລະບົບຂໍ້ມູນຂ່າວສານ ທີ່ສ້າງຂຶ້ນເປັນໜຶ່ງ ຫຼື ຫຼາຍໜ້າເວັບ;

7. **ຄວາມຖືກຕ້ອງຂອງຊອບແວ (Correctness)** ໝາຍເຖິງ ການປະມວນຜົນຂອງຊອບແວ ຕ້ອງມີຄວາມຖືກຕ້ອງ ແລະ ປອດໄພ;

8. **ຄວາມໜ້າເຊື່ອຖືຂອງຊອບແວ (Reliability)** ໝາຍເຖິງ ຕ້ອງມີຄວາມຜິດພາດໜ້ອຍທີ່ສຸດ ຖ້າເກີດຂໍ້ຜິດພາດຕ້ອງສາມາດແກ້ໄຂໄດ້ງ່າຍ ແລະ ໃຊ້ເວລາໜ້ອຍທີ່ສຸດ;

9. **ປະສິດທິພາບຂອງຊອບແວ (Efficiency)** ໝາຍເຖິງ ຕ້ອງມີການນຳໃຊ້ຊັບພະຍາກອນລະບົບຄອມພິວເຕີ ແລະ ອິນເຕີເນັດ ໜ້ອຍທີ່ສຸດ;

10. **ມາວແວ (Malicious Software)** ໝາຍເຖິງ ຊອບແວ ຫຼື ໂປຣແກຣມທີ່ສ້າງຂຶ້ນເພື່ອທຳລາຍລະບົບຄອມພິວເຕີ, ລັກເອົາຂໍ້ມູນຄອມພິວເຕີ ຫຼື ເປັນຊ່ອງທາງໃນການເຂົ້າມາດັດແປງ ຫຼື ຄວບຄຸມເຄື່ອງຄອມພິວເຕີ;

11. **ISO/IEC 29110 (International Organization for Standardization/ International Electrotechnical Commission 29910)** ໝາຍເຖິງ ມາດຕະຖານສາກົນທີ່ກ່ຽວຂ້ອງໃນການພັດທະນາຊອບແວເພື່ອໃຊ້ໃນຂະບວນການຜະລິດວິສະວະກຳຊອບແວ;

12. **ຜູ້ດຳເນີນທຸລະກິດ** ໝາຍເຖິງ ຜູ້ທີ່ໄດ້ຮັບອະນຸຍາດຈາກຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໃນການດຳເນີນທຸລະກິດທາງດ້ານຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານ;

13. **ຂະບວນການ** ໝາຍເຖິງ ຂັ້ນຕອນການສ້າງ, ການພັດທະນາ ແລະ ການເຄື່ອນໄຫວ ອື່ນໆ;

14. **ຜະລິດຕະພັນເຕັກໂນໂລຊີສື່ສານຂໍ້ມູນຂ່າວສານ** ໝາຍເຖິງ ຊອບແວ, ຮາດແວ ແລະ ຂໍ້ມູນຂ່າວສານ ທີ່ກ່ຽວຂ້ອງກັບການສື່ສານຂໍ້ມູນຂ່າວສານ;

15. **ໄວຣັສ (Virus)** ໝາຍເຖິງ ໂປຣແກຣມທີ່ສ້າງຂຶ້ນສະເພາະ ຊຶ່ງສາມາດແຜ່ກະຈາຍ, ສ້າງຄວາມເສຍຫາຍ ຫຼື ທຳລາຍລະບົບຄອມພິວເຕີ, ເຄືອຂ່າຍຄອມພິວເຕີ ແລະ ຂໍ້ມູນຄອມພິວເຕີ;

**ມາດຕາ 4. ຂອບເຂດການນຳໃຊ້**

ຂໍ້ຕົກລົງສະບັບນີ້ ນຳໃຊ້ສຳລັບບຸກຄົນ ຫຼື ນິຕິບຸກຄົນ ທີ່ດຳເນີນທຸລະກິດທາງດ້ານຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຢູ່ພາຍໃນ ສປປ ລາວ.

## ໝວດທີ 2
## ການອະນຸຍາດ

**ມາດຕາ 5. ປະເພດການດຳເນີນທຸລະກິດ**

ການດຳເນີນທຸລະກິດທາງດ້ານຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານ ຜ່ານອິນເຕີເນັດມີ ສອງ ປະເພດ ດັ່ງນີ້:

1. ການດຳເນີນທຸລະກິດຊອບແວ;
2. ການດຳເນີນທຸລະກິດສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ.

**5.1 ຜູ້ດຳເນີນທຸລະກິດຊອບແວ**

ຜູ້ດຳເນີນທຸລະກິດຊອບແວ ແມ່ນຜູ້ທີ່ເຄື່ອນໄຫວທາງທຸລະກິດໃນການບໍລິການສ້າງ, ພັດທະນາ, ຕິດຕັ້ງ, ຈຳໜ່າຍ ແລະ ໃຫ້ເຊົ່າໃຊ້ຊອບແວ.

**5.2 ຜູ້ດຳເນີນທຸລະກິດສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ຜູ້ດຳເນີນທຸລະກິດສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນຜູ້ທີ່ເຄື່ອນໄຫວທາງທຸລະກິດໃນການສ້າງ, ພັດທະນາ ແລະ ໃຫ້ບໍລິການຂໍ້ຄວາມ, ຮູບພາບ, ສຽງ, ວິດີໂອ ໃນຮູບແບບຂໍ້ມູນເອເລັກໂຕຣນິກ ທີ່ສະແດງຜົນຜ່ານອຸປະກອນເອເລັກໂຕຣນິກທີ່ມີການເຊື່ອມຕໍ່ກັບອິນເຕີເນັດ.

**ມາດຕາ 6. ມາດຕະຖານເຕັກນິກ ແລະ ຄວາມປອດໄພ**

**6.1 ມາດຕະຖານເຕັກນິກ**

ມາດຕະຖານເຕັກນິກຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງມີ ດັ່ງນີ້:

1. ຮອງຮັບຕົວອັກສອນພາສາລາວ;
2. ມີຄວາມຖືກຕ້ອງ (Correctness) ແລະ ໜ້າເຊື່ອຖື (Reliability);
3. ມີປະສິດທິພາບ (Efficiency), ໃຊ້ງານງ່າຍ (User friendliness), ງ່າຍໃນການຕິດຕັ້ງ ແລະ ບຳລຸງຮັກສາ (Maintainability);
4. ມີຄູ່ມືແນະນຳການນຳໃຊ້ (User Documentation);
5. ຮັບປະກັນຜະລິດຕະພັນບໍ່ໃຫ້ມີໄວຣັສ (Virus) ຫຼື ມາວແວ (Malware);
6. ສອດຄ່ອງຕາມມາດຕະຖານເຕັກນິກສາກົນ ໃນການພັດທະນາຜະລິດຕະພັນ ທາງດ້ານຊອບແວ ISO/IEC 29110.

7. ຂໍ້ມູນ ແລະ ຖານຂໍ້ມູນຕ້ອງເກັບໄວ້ໃນດິນແດນຂອງ ສປປ ລາວ;
8. ຮັບປະກັນການເຊື່ອມຕໍ່ ຜ່ານສູນກາງເຊື່ອມຕໍ່ອິນເຕີເນັດທີ່ຂຶ້ນກັບ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

### 6.2 ມາດຕະຖານຄວາມປອດໄພ

ມາດຕະຖານຄວາມປອດໄພຂອງຊອບແວ ແລະ ຂໍ້ມູນແບບເອເລັກໂຕນິກຜ່ານອິນເຕີເນັດ ຕ້ອງມີ ດັ່ງນີ້:

1. ມີລະບົບເກັບຮັກສາຂໍ້ມູນທັງໝົດໄວ້ຢ່າງໜ້ອຍ 90 ວັນ ແລະ ລະບົບການກູ້ຄືນຂໍ້ມູນ;
2. ມີການຄວບຄຸມການເຂົ້າເຖິງ ແລະ ການພິສູດຕົວຕົນ ກ່ອນການນໍາໃຊ້ຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ;
3. ການເກັບຮັກສາຂໍ້ມູນທີ່ເປັນຄວາມລັບຂອງຜູ້ຊົມໃຊ້ ແລະ ການສົ່ງ-ຮັບຂໍ້ມູນສໍາຄັນ ຕ້ອງມີການເຂົ້າລະຫັດເພື່ອຄວາມປອດໄພ;
4. ໃນການເຂົ້າເຖິງຂໍ້ມູນທີ່ສໍາຄັນຂອງຜູ້ນໍາໃຊ້ທີ່ຢູ່ໃນລະບົບ ຕ້ອງແມ່ນຜູ້ທີ່ໄດ້ຮັບອະນຸຍາດໃຫ້ເຂົ້າເຖິງເທົ່ານັ້ນ;
5. ການລະບຸອຸປະກອນທີ່ເຊື່ອມຕໍ່ເຂົ້າກັບລະບົບການສື່ສານຂໍ້ມູນຂ່າວສານ ເພື່ອກວດສອບການເຊື່ອມຕໍ່ຂອງອຸປະກອນດັ່ງກ່າວວ່າມາຈາກສະເພາະອຸປະກອນເຄືອຂ່າຍທີ່ໄດ້ຮັບອະນຸຍາດ ຫຼື ສະຖານທີ່ ທີ່ໄດ້ຮັບອະນຸຍາດໃນການເຊື່ອມຕໍ່.

### ມາດຕາ 7. ການຂໍອະນຸຍາດ

ນິຕິບຸກຄົນ ທີ່ມີຈຸດປະສົງດໍາເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງຂໍໃບອະນຸຍາດດໍາເນີນທຸລະກິດ ນໍາຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ.

### ມາດຕາ 8. ເງື່ອນໄຂພິຈາລະນາອອກໃບອະນຸຍາດ

ການພິຈາລະນາອອກໃບອະນຸຍາດໃນການດໍາເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງມີເງື່ອນໄຂ ດັ່ງນີ້:

1. ມີວິຊາການທີ່ກ່ຽວຂ້ອງ ກັບປະເພດຂອງການບໍລິການ;
2. ມີສະຖານທີ່ຕັ້ງເໝາະສົມ;
3. ບໍ່ຢູ່ໃນຊ່ວງໄລຍະທີ່ຖືກອາຍັດຊັບສິນ, ຢູ່ໃນຂະບວນການລົ້ມລະລາຍ ຫຼື ຖືກສານຕັດສິນເປັນຜູ້ລົ້ມລະລາຍຕາມກົດໝາຍຂອງ ສປປ ລາວ.
4. ຕ້ອງປະກອບເອກະສານ ຕາມທີ່ກໍານົດໃນເອກະສານຊ້ອນທ້າຍ.

### ມາດຕາ 9. ການພິຈາລະນາອອກໃບອະນຸຍາດ

ການຄົ້ນຄວ້າ, ພິຈາລະນາ ອອກໃບອະນຸຍາດ ຕ້ອງສໍາເລັດພາຍໃນກໍານົດເວລາ 10 ວັນ ລັດຖະການ ນັບແຕ່ວັນທີ່ໄດ້ຮັບຄໍາຮ້ອງເປັນຕົ້ນໄປ.

ໃນກໍລະນີເອກະສານ ບໍ່ຖືກຕ້ອງ, ບໍ່ຄົບຖ້ວນ ຫຼື ບໍ່ມີເງື່ອນໄຂໄດ້ຮັບອະນຸຍາດ ຕ້ອງແຈ້ງໃຫ້ຜູ້ຂໍອະນຸຍາດຮັບຊາບພາຍໃນກໍານົດເວລາ 5 ວັນ ລັດຖະການ.

**ມາດຕາ 10. ການຕໍ່, ປ່ຽນແປງ, ໂຈະ ຫຼື ຍຸບເລີກ**

ການຕໍ່ໃບອະນຸຍາດປະເພດການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຕ້ອງປະກອບເອກະສານທີ່ລະບຸໄວ້ໃນເອກະສານຊ້ອນທ້າຍ ແລະ ຍື່ນໃບຄຳຮ້ອງຂໍຕໍ່ ກ່ອນວັນໝົດອາຍຸ ຢ່າງໜ້ອຍ 30 ວັນ ຊຶ່ງອົງການຄຸ້ມຄອງ ແລະ ກວດກາ ຈະໃຊ້ເວລາພິຈາລະນາພາຍໃນ 5 ວັນ ລັດຖະການ.

ບຸກຄົນ ຫຼື ນິຕິບຸກຄົນ ທີ່ມີຈຸດປະສົງ ຂໍປ່ຽນແປງເນື້ອໃນໃບອະນຸຍາດ, ໂຈະ ຫຼື ຍຸບເລີກ ການດຳເນີນທຸລະກິດຂອງຕົນ ຕ້ອງໄດ້ຮັບອະນຸຍາດຈາກກະຊວງການໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍສະເໜີ ແລະ ປະກອບເອກະສານ ເພື່ອຊີ້ແຈງເຫດຜົນ.

**ມາດຕາ 11. ຂອບເຂດຂອງການດຳເນີນທຸລະກິດ**

ໃບອະນຸຍາດປະເພດການດຳເນີນທຸລະກິດການໃຫ້ບໍລິການຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ສາມາດນຳໃຊ້ໄດ້ໃນຂອບເຂດທີ່ກຳນົດໃນໃບອະນຸຍາດເທົ່ານັ້ນ ແລະ ມີອາຍຸການນຳໃຊ້ ໜຶ່ງປີ ນັບແຕ່ວັນທີອອກໃບອະນຸຍາດ ເປັນຕົ້ນໄປ.

**ມາດຕາ 12. ຄ່າທຳນຽມ ແລະ ຄ່າບໍລິການ**

ຄ່າທຳນຽມ ແລະ ຄ່າບໍລິການ ໃນການຂໍອະນຸຍາດການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນໃຫ້ປະຕິບັດຕາມທີ່ໄດ້ກຳນົດໄວ້ໃນລະບຽບການສະເພາະ ກ່ຽວກັບຄ່າທຳນຽມ ແລະ ຄ່າບໍລິການ ທີ່ປະກາດໃຊ້ໃນແຕ່ໄລຍະ.

## ໝວດທີ 3
## ສິດ ແລະ ພັນທະ

**ມາດຕາ 13. ສິດ ແລະ ພັນທະ ຂອງຜູ້ດຳເນີນທຸລະກິດ**

ຜູ້ດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສິດ ແລະ ພັນທະ ດັ່ງນີ້:

1. ໃຫ້ບໍລິການຕາມປະເພດທຸລະກິດ ທີ່ຕົນໄດ້ຮັບອະນຸຍາດ;
2. ສະເໜີຂໍຕໍ່, ປ່ຽນແປງ, ໂຈະ ຫຼື ຍຸບເລີກ ການດຳເນີນກິດຈະການຂອງຕົນ;
3. ປົກປ້ອງສິດ ແລະ ຜົນປະໂຫຍດໃນການໃຫ້ບໍລິການຂອງຕົນ;
4. ຮັບປະກັນການໃຫ້ບໍລິການຢ່າງມີຄຸນນະພາບ ແລະ ມີການບຳລຸງຮັກສາຕາມຄວາມເໝາະສົມຂອງແຕ່ລະປະເພດຂອງຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ;
5. ຮັບຜິດຊອບຕໍ່ຂໍ້ມູນຂ່າວສານຂອງຕົນ ແລະ ບໍ່ໃຫ້ມີຜົນກະທົບ ຕໍ່ຜູ້ອື່ນ;
6. ເຄົາລົບສິດ ແລະ ຮັກສາຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ, ບໍ່ເປີດເຜີຍຂໍ້ມູນສ່ວນຕົວຂອງຜູ້ໃຊ້ບໍລິການ ຍົກເວັ້ນມີການສະເໜີຂອງອົງການຈັດຕັ້ງລັດທີ່ມີສິດອຳນາດກ່ຽວຂ້ອງ;
7. ໃຫ້ການຮ່ວມມື, ຕິດຕາມ, ກວດກາ ແລະ ສະກັດກັ້ນ ການເຄື່ອນໄຫວດ້ານຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ຂອງບຸກຄົນ ແລະ ນິຕິບຸກຄົນ ພາຍໃນປະເທດ ທີ່ສ້າງຜົນກະທົບຕໍ່ວຽກງານປ້ອງກັນຊາດ-ປ້ອງກັນຄວາມສະຫງົບ ແລະ ວັດທະນະທຳ-ສັງຄົມ;
8. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ຫຼື ລະບຽບການ.

**ມາດຕາ 14. ສິດ ແລະ ພັນທະ ຂອງຜູ້ໃຊ້ບໍລິການ**

ຜູ້ໃຊ້ບໍລິການຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີສິດ ດັ່ງນີ້:

1. ໄດ້ຮັບການບໍລິການທີ່ມີຄຸນນະພາບ, ສະດວກ, ວ່ອງໄວ ແລະ ປອດໄພ;
2. ທວງຖາມ ແລະ ຮ້ອງຟ້ອງຜູ້ດຳເນີນທຸລະກິດຕາມຂັ້ນຕອນຂະບວນການຍຸຕິທຳ ເພື່ອໃຫ້ຄວາມເປັນທຳຕໍ່ຜູ້ຊົມໃຊ້;
3. ສະເໜີຕໍ່ອົງການຄຸ້ມຄອງ ແລະ ກວດກາ ກ່ຽວກັບຄຸນນະພາບການບໍລິການ, ມາດຕະຖານເຕັກນິກ ແລະ ຄ່າບໍລິການຕ່າງໆ ຂອງຜູ້ດຳເນີນທຸລະກິດ;
4. ຮັບຜິດຊອບຕໍ່ຂໍ້ມູນຂ່າວສານຂອງຕົນ ຊຶ່ງອາດເປັນຜົນກະທົບຕໍ່ບຸກຄົນ, ນິຕິບຸກຄົນ, ອົງການຈັດຕັ້ງ ແລະ ສັງຄົມ ທີ່ເປັນການລະເມີດຕໍ່ກົດໝາຍ ຫຼື ລະບຽບການ;
5. ຈ່າຍຄ່າບໍລິການຕາມລະບຽບການ;
6. ນຳໃຊ້ສິດ ແລະ ປະຕິບັດພັນທະອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ຫຼື ລະບຽບການ.

## ໝວດທີ 4
## ຂໍ້ຫ້າມ

**ມາດຕາ 15. ຂໍ້ຫ້າມທົ່ວໄປ**

ຫ້າມບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ດຳເນີນທຸລະກິດໂດຍບໍ່ໄດ້ຮັບອະນຸຍາດຈາກຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ;
2. ກີດກັ້ນ, ຂັດຂວາງການດຳເນີນທຸລະກິດການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ;
3. ຮ່ວມມື, ສ້າງເງື່ອນໄຂ ຫຼື ອຳນວຍຄວາມສະດວກໃຫ້ແກ່ບຸກຄົນ, ນິຕິບຸກຄົນໃດໜຶ່ງ ໃນການລະເມີດຂໍ້ຫ້າມ ທີ່ກຳນົດໄວ້ໃນຂໍ້ຕົກລົງສະບັບນີ້;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດຕໍ່ກົດໝາຍ ຫຼື ລະບຽບການທີ່ກ່ຽວຂ້ອງ.

**ມາດຕາ 16. ຂໍ້ຫ້າມພະນັກງານຄຸ້ມຄອງ ແລະ ກວດກາ**

ຫ້າມພະນັກງານຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີພຶດຕິກຳ ດັ່ງນີ້:

1. ກົດໜ່ວງ, ຖ່ວງດຶງ ແລະ ປອມແປງເອກະສານ;
2. ສວຍໃຊ້ໜ້າທີ່ຕຳແໜ່ງ ເພື່ອຫາຜົນປະໂຫຍດສ່ວນຕົວກັບຜູ້ດຳເນີນທຸລະກິດ;
3. ເປີດເຜີຍຂໍ້ມູນລັບ ຂອງຜູ້ດຳເນີນທຸລະກິດ;
4. ມີພຶດຕິກຳອື່ນ ທີ່ລະເມີດຕໍ່ກົດໝາຍ ຫຼື ລະບຽບການ ທີ່ກ່ຽວຂ້ອງ.

**ມາດຕາ 17. ຂໍ້ຫ້າມສຳລັບຜູ້ດຳເນີນທຸລະກິດ**

ຫ້າມຜູ້ດຳເນີນທຸລະກິດເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີພຶດຕິກຳ ດັ່ງນີ້:

1. ນຳໃບອະນຸຍາດໃຫ້ຄົນອື່ນໃຊ້, ເຊົ່າ ຫຼື ໂອນ;
2. ໃຫ້ບໍລິການນອກເໜືອຈາກປະເພດການໃຫ້ບໍລິການ, ຕາມທີ່ກຳນົດໃນໃບອະນຸຍາດ ຫຼື ຂອບເຂດທີ່ກຳນົດໄວ້;
3. ອຸດໜູນ, ຄອບງຳ ຫຼື ໃຊ້ອຳນາດການຕະຫຼາດທີ່ບໍ່ເປັນທຳ ຕໍ່ຜູ້ໃຫ້ບໍລິການອື່ນ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ ແລະ ລະບຽບການ ທີ່ກ່ຽວຂ້ອງ.

## ໝວດທີ 5
## ການຄຸ້ມຄອງ ແລະ ກວດກາ

**ມາດຕາ 18. ອົງການຄຸ້ມຄອງ ແລະ ກວດກາ ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ**

ອົງການຄຸ້ມຄອງ ແລະ ກວດກາ ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ແມ່ນຂະແໜງການ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ໂດຍປະສານສົມທົບກັບຂະແໜງການທີ່ກ່ຽວຂ້ອງ.

**ມາດຕາ 19. ສິດ ແລະ ໜ້າທີ່ຂອງກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ**

ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນໃບອະນຸຍາດ;
2. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ, ມາດຕະຖານ ແລະ ລະບຽບການ ຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ;
4. ພິຈາລະນາແກ້ໄຂຄຳສະເໜີ ກ່ຽວກັບການອະນຸຍາດການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ເປັນຕົ້ນ ຄຸນນະພາບຜະລິດຕະພັນ, ການບໍລິການ, ມາດຕະຖານເຕັກນິກ, ຄວາມປອດໄພ, ຄ່າບໍລິການ ແລະ ອື່ນໆ;
5. ເກັບຄ່າທຳນຽມ ແລະ ຄ່າບໍລິການ ໃນການອອກໃບອະນຸຍາດ ແລະ ຄ່າອື່ນໆ ຕາມກົດໝາຍ ຫຼື ລະບຽບການ ກຳນົດໄວ້;
6. ປະຕິບັດສິດ ແລະ ໜ້າທີ່ອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

**ມາດຕາ 20. ສິດ ແລະ ໜ້າທີ່ຂອງ ພະແນກ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນ**

ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານແຂວງ/ນະຄອນ ມີສິດ ແລະ ໜ້າທີ່ ດັ່ງນີ້:

1. ພິຈາລະນາອອກ, ຕໍ່, ປ່ຽນແປງ, ໂຈະ ແລະ ຖອນໃບອະນຸຍາດຕາມ ກະຊວງ ໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ກຳນົດໃຫ້;
2. ຕິດຕາມ ແລະ ກວດກາ ການປະຕິບັດເງື່ອນໄຂ ແລະ ລະບຽບການຕາມຂໍ້ຕົກລົງສະບັບນີ້;
3. ກ່າວເຕືອນ, ສຶກສາອົບຮົມ ຫຼື ປັບໃໝ ຕໍ່ບຸກຄົນ ແລະ ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້;
4. ປະຕິບັດສິດອື່ນ ຕາມທີ່ກຳນົດໄວ້ໃນກົດໝາຍ ແລະ ລະບຽບການ.

## ໝວດທີ 6
## ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 21. ມາດຕະການຕໍ່ຜູ້ລະເມີດ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ໄດ້ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ, ປັບໃໝ, ໂຈະ ຫຼື ຖອນ ໃບອະນຸຍາດ ແລ້ວແຕ່ກໍລະນີເບົາ ຫຼື ໜັກ ລວມທັງໃຊ້ແທນຄ່າເສຍຫາຍທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 22. ມາດຕະການສຶກສາອົບຮົມ**

ພະນັກງານລັດ ຫຼື ຜູ້ດຳເນີນທຸລະກິດ ທີ່ລະເມີດ ຂໍ້ຕົກລົງສະບັບນີ້ ຈະຖືກສຶກສາອົບຮົມ ດັ່ງນີ້:

1. ພະນັກງານຂອງລັດທີ່ເຮັດວຽກຄຸ້ມຄອງ ບໍ່ໃຫ້ຄວາມສະດວກ, ຊັກຊ້າ, ກົດໜ່ວງຖ່ວງດຶງ ການພິຈາລະນາຄຳຮ້ອງຂໍອະນຸຍາດ ໂດຍບໍ່ມີເຫດຜົນ, ໃຊ້ມາລະຍາດ ຫຼື ຄຳເວົ້າທີ່ບໍ່ເໝາະສົມ;
2. ຜູ້ດຳເນີນທຸລະກິດ ບໍ່ໃຫ້ຄວາມສະດວກແກ່ຜູ້ຊົມໃຊ້ ຫຼື ລະເມີດຂໍ້ຫ້າມໃນສະຖານເບົາ.

**ມາດຕາ 23. ມາດຕະການທາງວິໄນ**

ພະນັກງານຄຸ້ມຄອງ ແລະ ກວດກາ ທີ່ລະເມີດຂໍ້ຫ້າມໃນຂໍ້ຕົກລົງສະບັບນີ້ ທີ່ບໍ່ເປັນການກະທຳຜິດທາງ ອາຍາ ແລະ ກໍ່ຄວາມເສຍຫາຍເລັກນ້ອຍ ຈະຖືກລົງວິໄນຕາມແຕ່ລະກໍລະນີ ດັ່ງນີ້:

1. ຕຳນິ ຫຼື ກ່າວເຕືອນ ພ້ອມທັງບັນທຶກໄວ້ໃນສຳນວນເອກະສານຊີວະປະຫວັດ ຂອງຜູ້ກ່ຽວ;
2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ ແລະ ການຍ້ອງຍໍ;
3. ປົດຕຳແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ມີຕຳແໜ່ງຕໍ່າກວ່າເກົ່າ;
4. ໃຫ້ອອກຈາກລັດຖະກອນ ໂດຍບໍ່ໄດ້ຮັບນະໂຍບາຍໃດໆ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນໄດ້ມາຢ່າງບໍ່ຖືກຕ້ອງນັ້ນ ຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

**ມາດຕາ 24. ມາດຕະການປັບໃໝ**

ບຸກຄົນ ຫຼື ນິຕິບຸກຄົນ ທີ່ລະເມີດຂໍ້ຕົກລົງສະບັບນີ້ ຈະຖືກປັບໃໝ ດັ່ງນີ້:

1. ດໍາເນີນທຸລະກິດການໃຫ້ບໍລິການຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ໂດຍບໍ່ໄດ້ຮັບອະນຸຍາດ ຈະຖືກປັບໃໝ 10,000,000 ກີບ;
2. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ຈະຖືກປັບໃໝ 5,000,000 ກີບ;
3. ໃຫ້ບໍລິການນອກເໜືອຈາກປະເພດການບໍລິການ, ໃນໃບອະນຸຍາດ ຫຼື ຂອບເຂດທີ່ກໍານົດໄວ້ ຈະຖືກປັບໃໝ 2,000,000 ກີບ;
4. ປອມແປງ, ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ, ເຊື່ອງອໍາຂໍ້ມູນ ຫຼື ບໍ່ໃຫ້ຄວາມຮ່ວມມື ກັບອົງການຄຸ້ມຄອງ ແລະ ກວດກາ ຈະຖືກປັບໃໝ 5,000,000 ກີບ;
5. ໂຄສະນາໃສ່ຮ້າຍປ້າຍສີ ຫຼື ສ້າງຄວາມເສຍຫາຍໃຫ້ຜູ້ບໍລິການລາຍອື່ນ ຈະຖືກປັບໃໝ 5,000,000 ກີບ;
6. ບໍ່ຕໍ່ໃບອະນຸຍາດ ພາຍໃນ 30 ວັນ ຫຼັງຈາກໃບອະນຸຍາດໝົດອາຍຸແລ້ວ ຈະຖືກປັບໃໝ 1,000,000 ກີບ.

**ມາດຕາ 25. ມາດຕະການໂຈະ ແລະ ຖອນໃບອະນຸຍາດ**

ອົງການຄຸ້ມຄອງ ແລະ ກວດກາ ຈະໂຈະໃບອະນຸຍາດປະເພດການດໍາເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ບໍລິການເກີນປະເພດ ຫຼື ຂອບເຂດສິດຂອງໃບອະນຸຍາດ;
2. ປອມແປງ, ເຊື່ອງອໍາຂໍ້ມູນ ຫຼື ສະໜອງຂໍ້ມູນທີ່ບໍ່ຖືກຕ້ອງ ຕາມການກໍານົດຂອງອົງການຄຸ້ມຄອງ ແລະ ກວດກາ;
3. ບໍ່ຊໍາລະຄ່າທໍານຽມ, ຄ່າບໍລິການ ຫຼື ອາກອນໃຫ້ລັດຕາມລະບຽບການ;
4. ລະເມີດກົດໝາຍ ລະ ລະບຽບການອື່ນທີ່ກ່ຽວຂ້ອງ.

ອົງການຄຸ້ມຄອງ ແລະ ກວດກາ ຈະຖອນໃບອະນຸຍາດປະເພດການດໍາເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ໃນກໍລະນີ ດັ່ງລຸ່ມນີ້:

1. ນໍາໃບອະນຸຍາດໃຫ້ຜູ້ອື່ນນໍາໃຊ້, ເຊົ່າ ຫຼື ໂອນ ໂດຍບໍ່ໄດ້ຮັບອະນຸຍາດ;
2. ຖືກໂຈະໃບອະນຸຍາດແລ້ວ ບໍ່ປະຕິບັດຕາມອົງການຄຸ້ມຄອງ ແລະ ກວດກາ ແຈ້ງການ ພາຍໃນໄລຍະເວລາ 90 ວັນ;
3. ລະເມີດກົດໝາຍ ແລະ ລະບຽບການອື່ນ ທີ່ກ່ຽວຂ້ອງ.

## ໝວດທີ 7
## ບົດບັນຍັດສຸດທ້າຍ

**ມາດຕາ 26. ການຈັດຕັ້ງປະຕິບັດ**

ມອບໃຫ້ ກົມເຕັກໂນໂລຊີຂໍ້ມູນຂ່າວສານ ແລະ ພະແນກໄປສະນີ, ໂທລະຄົມມະນາຄົມ ແລະ ການສື່ສານ ແຂວງ/ນະຄອນ ຈັດຕັ້ງປະຕິບັດຂໍ້ຕົກລົງສະບັບນີ້ ຢ່າງເຂັ້ມງວດ.

**ມາດຕາ 27. ຜົນສັກສິດ**

ຂໍ້ຕົກລົງສະບັບນີ້ ມີຜົນສັກສິດ ນັບແຕ່ໄດ້ລົງລາຍເຊັນ ແລະ ພາຍຫຼັງທີ່ໄດ້ລົງໃນຈົດໝາຍເຫດທາງລັດຖະການ ສິບຫ້າວັນ.

**ລັດຖະມົນຕີ**

**ປອ. ທັນສະໄໝ ກົມມະສິດ**

ສະບັບທີ 1: ລົງວັນທີ 21 ມັງກອນ 2017

# ເອກະສານຊ້ອນທ້າຍ

1. ເອກະສານປະກອບ ໃນການຂໍອະນຸຍາດການດຳເນີນທຸລະກິດ ຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີດັ່ງນີ້:
   - ໃບຄຳຮ້ອງ;
   - ໃບຢັ້ງຢືນທີ່ຢູ່;
   - ບັດປະຈຳຕົວຂອງຜູ້ຂໍອະນຸຍາດ/ໜັງສືຜ່ານແດນ;
   - ຊີວະປະຫວັດຜູ້ບໍລິຫານ;
   - ໃບຢັ້ງຢືນການສຶກສາຂອງຜູ້ບໍລິຫານ ຫຼື ພະນັກງານວິຊາການ;
   - ບົດວິພາກເສດຖະກິດ;
   - ສຳເນົາໃບທະບຽນວິສາຫະກິດ;
   - ໃບຢັ້ງຢືນຖານະການເງິນ/ບັນຊີເງິນເຄື່ອນໄຫວທຸລະກິດ;
   - ເອກະສານອື່ນໆ ທີ່ກ່ຽວຂ້ອງ.
2. ເອກະສານປະກອບ ໃນການຂໍຕໍ່ອະນຸຍາດການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີດັ່ງນີ້:
   - ໃບຄຳຮ້ອງ;
   - ໃບຢັ້ງຢືນທີ່ຢູ່;
   - ບົດສະຫຼຸບການປະກອບການປະຈຳປີຜ່ານມາ;
   - ໃບຢັ້ງຢືນຖານະການເງິນ/ບັນຊີເງິນເຄື່ອນໄຫວທຸລະກິດ;
   - ເອກະສານອື່ນໆ ທີ່ກ່ຽວຂ້ອງ.
3. ເອກະສານປະກອບ ໃນການຂໍໂຈະ, ປ່ຽນແປງ, ຍຸບເລີກ ການດຳເນີນທຸລະກິດຊອບແວ ແລະ ສູນບໍລິການຂໍ້ມູນຂ່າວສານຜ່ານອິນເຕີເນັດ ມີດັ່ງນີ້:
   - ໃບຄຳຮ້ອງ;
   - ໃບຢັ້ງຢືນທີ່ຢູ່;
   - ສຳເນົາໃບທະບຽນວິສາຫະກິດ;
   - ເອກະສານອື່ນໆ ທີ່ກ່ຽວຂ້ອງ.

ຫົວໜ້າກົມເຕັກໂນໂລຊີຂໍ້ມູນຂ່າວສານ

ດຣ. ທະວີສັກ ມະໂນທັມ